ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 006 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 23 ມັງກອນ 2025

# ລັດຖະດຳລັດ

## ກ່ຽວກັບການປະກາດໃຊ້

## ກົດໝາຍວ່າດ້ວຍສະຫະພັນແມ່ຍິງລາວ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 144/ສພຊ, ລົງວັນທີ 11 ທັນວາ 2024 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍສະຫະພັນແມ່ຍິງລາວ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 02/ຄປຈ, ລົງວັນທີ 9 ມັງກອນ 2025.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍວ່າດ້ວຍສະຫະພັນແມ່ຍິງລາວ (ສະບັບປັບປຸງ).

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ປະທານປະເທດ

ທອງລຸນ ສີສຸລິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 144 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 11 / 12 / 24

# ມະຕິ
# ກອງປະຊຸມສະພາແຫ່ງຊາດ
# ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍສະຫະພັນແມ່ຍິງລາວ (ສະບັບປັບປຸງ)

- ອີງຕາມລັດຖະທໍາມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 53 ຂໍ້ 1;
- ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍສະຫະພັນແມ່ຍິງລາວ (ສະບັບປັບປຸງ) ໃນວາລະຂອງກອງປະຊຸມຕອນບ່າຍຂອງວັນທີ 3 ທັນວາ 2024 ແລະ ຖືກພິຈາລະນາຮັບຮອງເອົາໃນວາລະຕອນບ່າຍຂອງວັນທີ 11 ທັນວາ 2024.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍສະຫະພັນແມ່ຍິງລາວ (ສະບັບປັບປຸງ) ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈໍານວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 65 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 11 ທັນວາ 2024

# ກົດໝາຍ
# ວ່າດ້ວຍສະຫະພັນແມ່ຍິງລາວ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ ແລະ ການຕິດຕາມ ກວດກາ ວຽກງານສະຫະພັນແມ່ຍິງລາວ ເພື່ອເຮັດໃຫ້ການ ນຳໃຊ້ສິດ, ປະຕິບັດພາລະບົດບາດ, ໜ້າທີ່, ພັນທະ ຂອງສະຫະພັນແມ່ຍິງລາວ ມີປະສິດທິພາບ, ມີປະສິດທິຜົນ ແລະ ມີຄວາມເຂັ້ມແຂງ ແນໃສ່ຮັບປະກັນການພັດທະນາ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງ ສະມາຊິກສະຫະພັນແມ່ຍິງລາວ ແລະ ແມ່ຍິງລາວບັນດາເຜົ່າໃນທົ່ວປະເທດ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 (ປັບປຸງ) ສະຫະພັນແມ່ຍິງລາວ**

ສະຫະພັນແມ່ຍິງລາວ ແມ່ນ ອົງການຈັດຕັ້ງມະຫາຊົນໜຶ່ງ ໃນລະບົບການເມືອງຂອງລະບອບປະຊາທິປະໄຕປະຊາຊົນລາວ, ເປັນອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງສະມາຊິກສະຫະພັນແມ່ຍິງລາວ ແລະ ແມ່ຍິງລາວບັນດາເຜົ່າໃນທົ່ວປະເທດ, ເຄື່ອນໄຫວພາຍໃຕ້ລັດຖະທຳມະນູນ ແລະ ກົດໝາຍຂອງ ສປປ ລາວ.

ສະຫະພັນແມ່ຍິງລາວ ຂຽນຫຍໍ້ວ່າ “ສຍລ”.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ແມ່ຍິງລາວ** ໝາຍເຖິງ ແມ່ຍິງ ທີ່ຖືສັນຊາດລາວ ຊຶ່ງດຳລົງຊີວິດ ຢູ່ພາຍໃນ ແລະ ຕ່າງປະເທດ;
2. **ຄະນະບໍລິຫານງານສະຫະພັນແມ່ຍິງລາວ** ໝາຍເຖິງ ຄະນະນຳສະຫະພັນແມ່ຍິງລາວ ທີ່ຖືກເລືອກຕັ້ງໃນກອງປະຊຸມໃຫຍ່ຂອງສະຫະພັນແມ່ຍິງລາວ ແຕ່ລະຂັ້ນ;

3. **ກໍາມະການຄະນະບໍລິຫານງານສະຫະພັນແມ່ຍິງລາວ** ໝາຍເຖິງ ບຸກຄົນໃນຄະນະບໍລິຫານງານສະຫະພັນແມ່ຍິງລາວແຕ່ລະຂັ້ນ ທີ່ບໍ່ແມ່ນ ປະທານ, ຮອງປະທານ;

4. **ການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງລາວ** ໝາຍເຖິງ ການສ້າງເງື່ອນໄຂ, ໃຫ້ໂອກາດແມ່ຍິງລາວໄດ້ຮັບການພັດທະນາໃນທຸກດ້ານ;

5. **ການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ຍິງລາວ** ໝາຍເຖິງ ການປ້ອງກັນບໍ່ໃຫ້ມີການລະເມີດ ແລະ ການເຮັດໃຫ້ແມ່ຍິງລາວ ໄດ້ຮັບສິດ, ຜົນປະໂຫຍດອັນຊອບທໍາໃນທຸກດ້ານ ເປັນຕົ້ນ ດ້ານ ການເມືອງ, ເສດຖະກິດ, ວັດທະນະທໍາ-ສັງຄົມ ໃນຊຸມຊົນ ແລະ ຄອບຄົວ;

6. **ອົງການຈັດຕັ້ງການເມືອງ-ສັງຄົມ** ໝາຍເຖິງ ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ສະຫະພັນກໍາມະບານລາວ, ສະຫະພັນແມ່ຍິງລາວ ແລະ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ;

7. **ອົງການຈັດຕັ້ງສັງຄົມ** ໝາຍເຖິງ ສະຫະພັນ, ສະມາຄົມ, ມູນນິທິ, ສະໂມສອນ ແລະ ການຈັດຕັ້ງອື່ນທີ່ສ້າງຕັ້ງຂຶ້ນ ຕາມກົດໝາຍ ແລະ ລະບຽບການ;

8. **ສະຫະພັນແມ່ຍິງຮາກຖານ** ໝາຍເຖິງ ການຈັດຕັ້ງສະຫະພັນແມ່ຍິງ ຢູ່ ບ້ານ, ກົມກອງ, ສະຖາບັນ, ໂຮງຮຽນ, ໂຮງໝໍ, ວິສາຫະກິດ, ໂຮງງານ ແລະ ຫົວໜ່ວຍແຮງງານອື່ນ;

9. **ສາຍຕັ້ງ** ໝາຍເຖິງ ສະຫະພັນແມ່ຍິງລາວແຕ່ລະຂັ້ນ ແຕ່ສູນກາງຮອດຮາກຖານ;

10. **ສາຍຂວາງ** ໝາຍເຖິງ ຄະນະພັກທີ່ສະຫະພັນແມ່ຍິງລາວແຕ່ລະຂັ້ນຂຶ້ນກັບ;

11. **ເງິນບໍາລຸງ** ໝາຍເຖິງ ເງິນທີ່ເກັບຈາກສະມາຊິກສະຫະພັນແມ່ຍິງລາວ ສົ່ງໃຫ້ການຈັດຕັ້ງສະຫະພັນແມ່ຍິງລາວແຕ່ລະຂັ້ນ ຕາມກົດລະບຽບຂອງສະຫະພັນແມ່ຍິງລາວ.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດ ກ່ຽວກັບວຽກງານສະຫະພັນແມ່ຍິງລາວ**

ລັດ ຊຸກຍູ້, ສົ່ງເສີມ ສະຫະພັນແມ່ຍິງລາວ ເຄື່ອນໄຫວຕາມພາລະບົດບາດ, ສິດ, ໜ້າທີ່ ຂອງຕົນໃນການປະຕິບັດແນວທາງ, ນະໂຍບາຍ, ລັດຖະທໍາມະນູນ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນພັດທະນາແມ່ຍິງລາວ, ແຜນດໍາເນີນງານແຫ່ງຊາດ ແລະ ລະບຽບການກ່ຽວກັບແມ່ຍິງລາວ ໃນແຕ່ລະໄລຍະ.

ລັດ ສົ່ງເສີມ ສ້າງເງື່ອນໄຂ ແລະ ອໍານວຍຄວາມສະດວກ, ໃຫ້ບຸລິມະສິດ ໃນການພັດທະນາ, ການປົກປ້ອງສິດ, ຜົນປະໂຫຍດອັນຊອບທໍາ ແລະ ການຮັກສາກຽດສັກສີ ຂອງແມ່ຍິງລາວ ເພື່ອສ້າງຄວາມເຂັ້ມແຂງ, ຄວາມກ້າວໜ້າຂອງແມ່ຍິງລາວ ແລະ ສົ່ງເສີມຄວາມສະເໝີພາບ ຍິງ-ຊາຍ ໃນທຸກດ້ານ.

ລັດ ສົ່ງເສີມໃຫ້ແມ່ຍິງລາວ ມີໂອກາດໄດ້ເຂົ້າຮ່ວມໃນການຄຸ້ມຄອງລັດ, ເສດຖະກິດ-ສັງຄົມ ແລະ ສົ່ງເສີມ ໃຫ້ແມ່ຍິງທີ່ມີມາດຕະຖານ ເຂົ້າໃນຕໍາແໜ່ງນໍາພາ ຄຸ້ມຄອງ, ຕັດສິນບັນຫາ ຢູ່ການຈັດຕັ້ງແຕ່ລະຂັ້ນ, ແຕ່ລະຂົງເຂດວຽກງານໃຫ້ຫຼາຍຂຶ້ນ.

**ມາດຕາ 5 (ປັບປຸງ) ຫຼັກການເຄື່ອນໄຫວວຽກງານສະຫະພັນແມ່ຍິງລາວ**

ສະຫະພັນແມ່ຍິງລາວ ເຄື່ອນໄຫວວຽກງານບົນພື້ນຖານຫຼັກການ ດັ່ງນີ້:

1. ຮັບປະກັນຄວາມສອດຄ່ອງກັບ ແນວທາງ ນະໂຍບາຍ, ລັດຖະທໍາມະນູນ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ, ແຜນພັດທະນາແມ່ຍິງລາວ ແລະ ແຜນດໍາເນີນງານແຫ່ງຊາດ ກ່ຽວກັບແມ່ຍິງລາວ ໃນແຕ່ລະໄລຍະ.

2. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ປຶກສາຫາລື ແລະ ເປັນເອກະພາບໃນການເຄື່ອນໄຫວພາຍໃຕ້ການນໍາພາ ຂອງພັກປະຊາຊົນ ປະຕິວັດລາວ;

3. ຮັບປະກັນຄວາມສະເໝີພາບ ຍິງ-ຊາຍ ແລະ ການເຊື່ອມສານບົດບາດ ຍິງ-ຊາຍ ເຂົ້າໃນທຸກຂົງເຂດວຽກງານ;

4. ຕື່ນຕົວສະໝັກໃຈ ເຂົ້າໃນການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສະຫະພັນແມ່ຍິງລາວ;

5. ປະສານສົມທົບກັບ ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ທັງພາກລັດ ແລະ ເອກະຊົນ.

6. ປະຕິບັດ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

**ມາດຕາ 6 (ປັບປຸງ) ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສະຫະພັນແມ່ຍິງລາວ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ການຝຶກອົບຮົມ, ການຄົ້ນຄວ້າວິທະຍາສາດ ເພື່ອພັດທະນາ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງສະມາຊິກສະຫະພັນແມ່ຍິງລາວ ແລະ ແມ່ຍິງລາວບັນດາເຜົ່າໃນທົ່ວປະເທດ, ປະຕິບັດຄວາມສະເໝີພາບ ຍິງ-ຊາຍ, ຖະແຫຼງການ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

## ພາກທີ II
## ສະຫະພັນແມ່ຍິງລາວ
### ໝວດທີ 1
### ທີ່ຕັ້ງ, ພາລະບົດບາດ, ສິດ, ໜ້າທີ່ ແລະ ການເຄື່ອນໄຫວຂອງສະຫະພັນແມ່ຍິງລາວ

**ມາດຕາ 7 (ປັບປຸງ) ທີ່ຕັ້ງ ຂອງສະຫະພັນແມ່ຍິງລາວ**

ສະຫະພັນແມ່ຍິງລາວ ແມ່ນ ອົງການຈັດຕັ້ງມະຫາຊົນໜຶ່ງ ໃນລະບົບການເມືອງຂອງລະບອບປະຊາທິປະໄຕປະຊາຊົນລາວ ພາຍໃຕ້ການນຳພາ ຊີ້ນຳໂດຍກົງຂອງພັກປະຊາຊົນ ປະຕິວັດລາວ, ມີລະບົບການຈັດຕັ້ງແຕ່ສູນກາງຮອດຮາກຖານ, ມີຖານະເທົ່າກັບອົງການຈັດຕັ້ງລັດ ແລະ ອົງການຈັດຕັ້ງມະຫາຊົນ ຂັ້ນສູນກາງ ແລະ ທ້ອງຖິ່ນ ແຕ່ລະຂັ້ນ.

**ມາດຕາ 8 (ປັບປຸງ) ພາລະບົດບາດຂອງສະຫະພັນແມ່ຍິງລາວ**

ສະຫະພັນແມ່ຍິງລາວ ມີພາລະບົດບາດ ເປັນອົງການຕົວແທນໃນ ການພັດທະນາ, ການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງສະມາຊິກສະຫະພັນແມ່ຍິງລາວ, ການສຶກສາອົບຮົມ, ເຕົ້າໂຮມຄວາມສາມັກຄີ, ເສີມຂະຫຍາຍສິດເປັນເຈົ້າຂອງແມ່ຍິງລາວ ແລະ ສົ່ງເສີມ ຄວາມກ້າວໜ້າ, ຄວາມສະເໝີພາບ ຍິງ-ຊາຍ, ຮັກສາ ແລະ ສົ່ງເສີມຄຸນລັກສະນະທີ່ເປັນມູນເຊື້ອຂອງແມ່ຍິງລາວບັນດາເຜົ່າ, ປຸກລະດົມແມ່ຍິງລາວ ເຂົ້າຮ່ວມໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 9 (ປັບປຸງ) ສິດ ແລະ ໜ້າທີ່ ຂອງສະຫະພັນແມ່ຍິງລາວ**

ສະຫະພັນແມ່ຍິງລາວ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາແມ່ຍິງລາວ ແລະ ແຜນດຳເນີນງານແຫ່ງຊາດ ກ່ຽວກັບແມ່ຍິງລາວ ໃນແຕ່ລະໄລຍະ, ນິຕິກຳໃຕ້ກົດໝາຍ ກ່ຽວກັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງ ສະມາຊິກສະຫະພັນແມ່ຍິງລາວ ແລະ ແມ່ຍິງລາວບັນດາເຜົ່າໃນທົ່ວປະເທດ, ການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງລາວ ແລະ ຄວາມສະເໝີພາບ ຍິງ-ຊາຍ;

2. ຄົ້ນຄວ້າ, ປະກອບຄຳເຫັນ ຕໍ່ ແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ເປັນຕົ້ນ ບັນຫາທີ່ກ່ຽວພັນເຖິງສະມາຊິກສະຫະພັນແມ່ຍິງລາວ ແລະ ແມ່ຍິງລາວບັນດາເຜົ່າທົ່ວປະເທດ;

3. ສຶກສາອົບຮົມສະມາຊິກສະຫະພັນແມ່ຍິງລາວ ແລະ ແມ່ຍິງລາວບັນດາເຜົ່າໃນທົ່ວປະເທດ ໃຫ້ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ຈັນຍາບັນ, ຈັນຍາທຳ, ມີນ້ຳໃຈຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ, ຮັກສາກຽດສັກສີ ຂອງແມ່ຍິງລາວ, ຮູ້ປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດ, ຂອງທ້ອງຖິ່ນ, ຂອງເຜົ່າ ແລະ ຄຸນລັກສະນະທີ່ເປັນມູນເຊື້ອຂອງແມ່ຍິງລາວບັນດາເຜົ່າ;

4. ຝຶກອົບຮົມ, ຍົກລະດັບຄວາມຮູ້, ຄວາມສາມາດ ແລະ ສະໜອງ ຂໍ້ມູນ ຂ່າວສານ ທີ່ເປັນປະໂຫຍດ ໃຫ້ແກ່ສະມາຊິກສະຫະພັນແມ່ຍິງລາວ ແລະ ແມ່ຍິງລາວບັນດາເຜົ່າໃນທົ່ວປະເທດ;

5. ປຸກລະດົມແມ່ຍິງເຂົ້າຮ່ວມຂະບວນການຕ່າງໆ ເປັນຕົ້ນ ການຈັດຕັ້ງປະຕິບັດ ແນວທາງ ນະໂຍບາຍ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ແລະ ມະຕິກອງປະຊຸມຂັ້ນ ຂອງຕົນ;

6. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ກ່ຽວກັບວຽກງານສະຫະພັນແມ່ຍິງລາວ;

7. ປັບປຸງ ແລະ ຂະຫຍາຍ ການຈັດຕັ້ງ, ສະມາຊິກສະຫະພັນແມ່ຍິງລາວ ໂດຍກວມເອົາທຸກຂົງເຂດທັງພາກລັດ ແລະ ເອກະຊົນ ໃຫ້ໜັກແໜ້ນ, ເຂັ້ມແຂງ ທັງຮັບປະກັນດ້ານປະລິມານ ແລະ ຄຸນນະພາບ;

8. ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງ ສະມາຊິກສະຫະພັນແມ່ຍິງລາວ ແລະ ແມ່ຍິງລາວບັນດາເຜົ່າໃນທົ່ວປະເທດ;

9. ສະເໜີສະມາຊິກສະຫະພັນແມ່ຍິງລາວ ທີ່ມີມາດຕະຖານ, ເງື່ອນໄຂ ເຂົ້າໃນອົງການຈັດຕັ້ງມະຫາຊົນອື່ນ, ການຈັດຕັ້ງຕ່າງໆ ແລະ ບັນຈຸ, ສັບຊ້ອນ, ຈັດວາງ ເຂົ້າໃນຕຳແໜ່ງ ນຳພາ ຄຸ້ມຄອງ ແຕ່ລະຂັ້ນ;

10. ຕິດຕາມ, ກວດກາ ການເຄື່ອນໄຫວ ຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ສະມາຊິກຂອງສະພາດັ່ງກ່າວ ຕາມຄຳສະເໜີຂອງສະມາຊິກສະຫະພັນແມ່ຍິງລາວ ແລະ ແມ່ຍິງລາວບັນດາເຜົ່າ ເພື່ອສະເໜີການຈັດຕັ້ງທີ່ກ່ຽວຂ້ອງພິຈາລະນາ;

11. ສາມາດດຳເນີນທຸລະກິດ ທີ່ບໍ່ຂັດກັບກົດໝາຍ ເປັນຕົ້ນ ທຸລະກິດທີ່ກ່ຽວພັນກັບການພັດທະນາສີມືແຮງງານ ແລະ ການສ້າງວິຊາຊີບ ຂອງແມ່ຍິງລາວ;

12. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານ ຂອງຕົນ ຕໍ່ສາຍຕັ້ງ ແລະ ສາຍຂວາງ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 10 (ປັບປຸງ) ຮູບການ ການເຄື່ອນໄຫວຂອງສະຫະພັນແມ່ຍິງລາວ**

ສະຫະພັນແມ່ຍິງລາວ ເຄື່ອນໄຫວຕາມຮູບການ ດັ່ງນີ້:

1. ການເຄື່ອນໄຫວທົ່ວໄປ ຊຶ່ງແມ່ນ ການຈັດຕັ້ງຜັນຂະຫຍາຍກົດໝາຍ, ກົດລະບຽບ ຂອງຕົນ ແລະ ບັນດາມະຕິທີ່ໄດ້ວາງອອກໃນກອງປະຊຸມສະຫະພັນແມ່ຍິງລາວ ລວມທັງການປຸກລະດົມສະມາຊິກສະຫະພັນແມ່ຍິງລາວ, ແມ່ຍິງລາວບັນດາເຜົ່າໃນການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນຍຸດທະສາດ, ແຜນພັດທະນາແມ່ຍິງລາວ ແລະ ແຜນດຳເນີນງານແຫ່ງຊາດ ກ່ຽວກັບແມ່ຍິງລາວໃນແຕ່ລະໄລຍະ, ມະຕິ ແລະ ຄຳສັ່ງຕ່າງໆ;

2. ການເຄື່ອນໄຫວໃນກອງປະຊຸມ ຊຶ່ງແມ່ນ ການເຂົ້າຮ່ວມ ແລະ ການຄົ້ນຄວ້າ ປະກອບຄຳເຫັນ ເພື່ອຕົກລົງບັນຫາສຳຄັນຂອງສະຫະພັນແມ່ຍິງລາວ;

3. ການເຄື່ອນໄຫວໃນຮູບການອື່ນ ທີ່ຖືກຕ້ອງຕາມກົດໝາຍ.

ມາດຕາ 11 (ປັບປຸງ) ເນື້ອໃນການເຄື່ອນໄຫວຂອງສະຫະພັນແມ່ຍິງລາວ

ການເຄື່ອນໄຫວຂອງສະຫະພັນແມ່ຍິງລາວ ມີເນື້ອໃນ ດັ່ງນີ້:

1. ສຶກສາອົບຮົມ ການເມືອງ-ແນວຄິດ, ໂຄສະນາ ເຜີຍແຜ່ ແນວທາງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ, ແຜນພັດທະນາແມ່ຍິງລາວ ແລະ ແຜນດຳເນີນງານແຫ່ງຊາດກ່ຽວກັບແມ່ຍິງລາວ ໃນແຕ່ລະໄລຍະ, ຍົກລະດັບຄວາມຮູ້ທາງດ້ານຕ່າງໆ ໃຫ້ແມ່ຍິງລາວບັນດາເຜົ່າ;

2. ປະຕິບັດ ຄຳຂວັນ ແລະ ເນື້ອໃນຂໍ້ແຂ່ງຂັນ ຂອງສະຫະພັນແມ່ຍິງລາວ ໃນແຕ່ລະໄລຍະ;

3. ສ້າງຄວາມເຂັ້ມແຂງໃຫ້ການຈັດຕັ້ງ ຂອງສະຫະພັນແມ່ຍິງລາວ, ຍົກລະດັບຄວາມຮູ້ ແລະ ຄວາມສາມາດໃນການ ນຳພາ ຊີ້ນຳ ວຽກງານສະຫະພັນແມ່ຍິງລາວ;

4. ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງ ສະມາຊິກສະຫະພັນແມ່ຍິງລາວ ແລະ ແມ່ຍິງລາວບັນດາເຜົ່າໃນທົ່ວປະເທດ, ສົ່ງເສີມ ຄວາມກ້າວໜ້າ ຂອງແມ່ຍິງລາວ ແລະ ຄວາມສະເໝີພາບ ຍິງ-ຊາຍ;

5. ສົ່ງເສີມການປະກອບອາຊີບ, ພັດທະນາສີມືແຮງງານ, ສ້າງເງື່ອນໄຂໃຫ້ແມ່ຍິງລາວ ໄດ້ມີວຽກເຮັດງານທຳ ເພື່ອສ້າງລາຍຮັບໃຫ້ແກ່ຄອບຄົວ ແລະ ເຂົ້າເຖິງແຫຼ່ງທຶນຕ່າງໆ ທີ່ຖືກຕ້ອງຕາມກົດໝາຍ ແນໃສ່ຮັບປະກັນການລຶບລ້າງຄວາມທຸກຍາກ ແລະ ປັບປຸງຊີວິດການເປັນຢູ່ ຂອງແມ່ຍິງລາວບັນດາເຜົ່າໃນທົ່ວປະເທດ, ຊຸກຍູ້ແມ່ຍິງລາວ ປະກອບອາຊີບໃນທຸກສາຂາອາຊີບ ໃຫ້ຫຼາຍຂຶ້ນ ແລະ ດຳເນີນຖືກຕ້ອງຕາມກົດໝາຍ;

6. ປົກປັກຮັກສາ, ເສີມຂະຫຍາຍມູນເຊື້ອວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດ, ຂອງທ້ອງຖິ່ນ, ຂອງເຜົ່າ ແລະ ຄຸນລັກສະນະທີ່ເປັນມູນເຊື້ອ ຂອງແມ່ຍິງລາວບັນດາເຜົ່າ;

7. ພົວພັນ, ຮ່ວມມື ກັບການຈັດຕັ້ງພັກ, ລັດ, ອົງການຈັດຕັ້ງການເມືອງ-ສັງຄົມ, ອົງການຈັດຕັ້ງສັງຄົມ, ສະຫະພັນແມ່ຍິງ ຂອງບັນດາປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນ;

8. ປະຕິບັດເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

## ໝວດທີ 2
## ລະບົບການຈັດຕັ້ງ ແລະ ໂຄງປະກອບ ບຸກຄະລາກອນ ຂອງສະຫະພັນແມ່ຍິງລາວ

ມາດຕາ 12 (ປັບປຸງ) ລະບົບການຈັດຕັ້ງ ຂອງສະຫະພັນແມ່ຍິງລາວ

ລະບົບການຈັດຕັ້ງ ຂອງສະຫະພັນແມ່ຍິງລາວ ມີ ສີ່ຂັ້ນ ດັ່ງນີ້:

1. ສູນກາງສະຫະພັນແມ່ຍິງລາວ;
2. ສະຫະພັນແມ່ຍິງ ນະຄອນຫຼວງ, ແຂວງ, ກະຊວງ, ອົງການ;
3. ສະຫະພັນແມ່ຍິງ ເມືອງ, ນະຄອນ ແລະ ການຈັດຕັ້ງທຽບເທົ່າ;
4. ສະຫະພັນແມ່ຍິງ ຮາກຖານ.

ສະຫະພັນແມ່ຍິງລາວແຕ່ລະຂັ້ນ ມີກົງຈັກຊ່ວຍວຽກ ຊຶ່ງໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ມາດຕາ 13 (ປັບປຸງ) ໂຄງປະກອບບຸກຄະລາກອນ ຂອງສະຫະພັນແມ່ຍິງລາວ

ໂຄງປະກອບບຸກຄະລາກອນຂອງສະຫະພັນແມ່ຍິງລາວ ມີ ດັ່ງນີ້:

1. ສະມາຊິກສະຫະພັນແມ່ຍິງລາວ;
2. ຄະນະບໍລິຫານງານສະຫະພັນແມ່ຍິງລາວ.

## ພາກທີ III

## ສະມາຊິກສະຫະພັນແມ່ຍິງລາວ

### ໝວດທີ 1

### ມາດຕະຖານ ແລະ ເງື່ອນໄຂ ຂອງສະມາຊິກສະຫະພັນແມ່ຍິງລາວ

**ມາດຕາ 14 (ປັບປຸງ) ສະມາຊິກສະຫະພັນແມ່ຍິງລາວ**

ສະມາຊິກສະຫະພັນແມ່ຍິງລາວ ແມ່ນ ແມ່ຍິງລາວ ທີ່ມີຄວາມຫ້າວຫັນ, ດີເດັ່ນ ຊຶ່ງໄດ້ຜ່ານການຝຶກຝົນ ຫຼໍ່ຫຼອມໃນຂະບວນການເຄື່ອນໄຫວວຽກງານມະຫາຊົນ, ມີມາດຕະຖານ ແລະ ເງື່ອນໄຂ ຄົບຖ້ວນ ແລະ ໄດ້ຮັບເຂົ້າເປັນສະມາຊິກສະຫະພັນແມ່ຍິງລາວ.

**ມາດຕາ 15 (ປັບປຸງ) ມາດຕະຖານ ແລະ ເງື່ອນໄຂ ຂອງສະມາຊິກສະຫະພັນແມ່ຍິງລາວ**

ມາດຕະຖານ ແລະ ເງື່ອນໄຂ ຂອງສະມາຊິກສະຫະພັນແມ່ຍິງລາວ ມີ ດັ່ງນີ້:

1. ເປັນແມ່ຍິງລາວ ທີ່ຖືສັນຊາດລາວ, ມີອາຍຸແຕ່ ສິບຫ້າປີ ຂຶ້ນໄປ;
2. ມີນ້ຳໃຈຮັກຊາດ, ຮັກລະບອບປະຊາທິປະໄຕ ປະຊາຊົນ, ຮັກກຽດສັກສີ ຂອງແມ່ຍິງລາວ, ມີຄຸນສົມບັດສິນທຳປະຕິວັດ;
3. ເປັນຜູ້ຫ້າວຫັນ, ດີເດັ່ນ ແລະ ເປັນແບບຢ່າງນຳໜ້າ ໃນຂະບວນການເຄື່ອນໄຫວວຽກງານມະຫາຊົນ ແລະ ວຽກງານອື່ນ;
4. ມີຄວາມຕື່ນຕົວ, ສະໝັກໃຈ ເຂົ້າເປັນສະມາຊິກສະຫະພັນແມ່ຍິງລາວ, ປະຕິບັດກົດໝາຍ ແລະ ກົດລະບຽບຂອງສະຫະພັນແມ່ຍິງລາວ ຢ່າງເຂັ້ມງວດ;
5. ມີສຸຂະພາບດີ.

### ໝວດທີ 2

### ສິດ, ໜ້າທີ່, ພັນທະ ແລະ ຜົນປະໂຫຍດ ຂອງສະມາຊິກສະຫະພັນແມ່ຍິງລາວ

**ມາດຕາ 16 (ປັບປຸງ) ສິດ ແລະ ໜ້າທີ່ ຂອງສະມາຊິກສະຫະພັນແມ່ຍິງລາວ**

ສະມາຊິກສະຫະພັນແມ່ຍິງລາວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ ແລະ ປະຕິບັດ ແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ກົດລະບຽບຂອງສະຫະພັນແມ່ຍິງລາວ;
2. ຝຶກຝົນຫຼໍ່ຫຼອມຕົນເອງ ໃຫ້ເປັນພົນລະເມືອງດີ, ພັດທະນາດີ ແລະ ສ້າງຄອບຄົວດີ;
3. ເຂົ້າຮ່ວມເຄື່ອນໄຫວ, ປຶກສາຫາລື ແລະ ປະກອບຄຳເຫັນ ຕໍ່ວຽກງານສະຫະພັນແມ່ຍິງລາວ;
4. ຄົ້ນຄວ້າ, ຮໍ່າຮຽນ, ຍົກລະດັບຄວາມຮູ້ທາງດ້ານ ທິດສະດີການເມືອງ, ວິຊາສະເພາະ, ພາສາຕ່າງປະເທດ, ຝຶກອົບຮົມວິຊາຊີບ, ພັດທະນາສີມືແຮງງານ ແລະ ດ້ານຕ່າງໆ;
5. ເຂົ້າເຖິງແຫຼ່ງທຶນຕ່າງໆ ທີ່ຖືກຕ້ອງຕາມກົດໝາຍ ເພື່ອພັດທະນາແມ່ຍິງລາວ;
6. ໄດ້ຮັບ ຂໍ້ມູນ ຂ່າວສານ ກ່ຽວກັບການພັດທະນາ ແລະ ປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງສະມາຊິກສະຫະພັນແມ່ຍິງລາວ ແລະ ແມ່ຍິງລາວບັນດາເຜົ່າໃນທົ່ວປະເທດ;

7. ສະເໜີ ຕໍ່ການຈັດຕັ້ງ ຂອງສະຫະພັນແມ່ຍິງລາວ, ອົງການທີ່ກ່ຽວຂ້ອງ ເພື່ອປົກປ້ອງ, ຟື້ນຟູສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ ທີ່ຖືກລ່ວງລະເມີດ;

8. ເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ ເຂົ້າໃນຄະນະບໍລິຫານງານສະຫະພັນແມ່ຍິງລາວ ແຕ່ລະຂັ້ນ, ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ, ອົງການຈັດຕັ້ງມະຫາຊົນ ແລະ ການຈັດຕັ້ງຕ່າງໆ ຕາມມາດຕະຖານ ແລະ ເງື່ອນໄຂ ທີ່ໄດ້ກຳນົດໄວ້ໃນກົດໝາຍ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 17 (ປັບປຸງ) ພັນທະຂອງສະມາຊິກສະຫະພັນແມ່ຍິງລາວ**

ສະມາຊິກສະຫະພັນແມ່ຍິງລາວ ມີພັນທະ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດ ລັດຖະທຳມະນູນ, ກົດໝາຍ ແລະ ກົດລະບຽບ ຂອງສະຫະພັນແມ່ຍິງລາວ;

2. ເປັນເຈົ້າການໃນການອະນຸລັກ ແລະ ສົ່ງເສີມ ວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດ, ຂອງທ້ອງຖິ່ນ, ຂອງເຜົ່າ ແລະ ຄຸນລັກສະນະທີ່ເປັນມູນເຊື້ອ ຂອງແມ່ຍິງລາວບັນດາເຜົ່າ;

3. ເປັນເຈົ້າການສຶກສາອົບຮົມ, ບຳລຸງ ສ້າງ, ຊ່ວຍເຫຼືອແມ່ຍິງລາວບັນດາເຜົ່າ ໃນການຝຶກຝົນຫຼໍ່ຫຼອມໃຫ້ມີຄວາມກ້າວໜ້າ, ດີເດັ່ນ ແລະ ເປັນແບບຢ່າງທີ່ດີ ເພື່ອຂະຫຍາຍເຂົ້າເປັນສະມາຊິກສະຫະພັນແມ່ຍິງລາວ;

4. ຮັກສາຄວາມສາມັກຄີພາຍໃນ ລະຫວ່າງ ແມ່ຍິງດ້ວຍກັນ, ຄອບຄົວ ແລະ ສັງຄົມ;

5. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 18 (ປັບປຸງ) ຜົນປະໂຫຍດຂອງສະມາຊິກສະຫະພັນແມ່ຍິງລາວ**

ສະມາຊິກສະຫະພັນແມ່ຍິງລາວ ໄດ້ຮັບຜົນປະໂຫຍດ ດັ່ງນີ້:

1. ໄດ້ຮັບການພັດທະນາ, ການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຈາກການຈັດຕັ້ງ ຂອງສະຫະພັນແມ່ຍິງລາວ ແລະ ອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງ;

2. ໄດ້ຮັບການບຳລຸງ ສ້າງ, ຍົກລະດັບຄວາມຮູ້ ແລະ ຄວາມສາມາດທາງດ້ານຕ່າງໆ ເທົ່າທຽມກັບ ເພດຊາຍ;

3. ໄດ້ຮັບການນຳສະເໜີເຂົ້າເປັນສະມາຊິກ ຂອງການຈັດຕັ້ງຕ່າງໆ, ໄດ້ຮັບການເລື່ອນຊັ້ນ, ຂັ້ນ, ການແຕ່ງຕັ້ງ, ບັນຈຸ ແລະ ສັບຊ້ອນເຂົ້າໃນຕຳແໜ່ງ ນຳພາ ຄຸ້ມຄອງ ຂັ້ນຕ່າງໆ ຕາມມາດຕະຖານ ແລະ ເງື່ອນໄຂ ທີ່ໄດ້ກຳນົດໄວ້ໃນກົດໝາຍ;

4. ໄດ້ຮັບການຊ່ວຍເຫຼືອ, ເບິ່ງແຍງທາງດ້ານ ວັດຖຸ, ຈິດໃຈ ໃນເວລາເຈັບເປັນ, ອອກລູກ, ເສຍຊີວິດ ຕາມນະໂຍບາຍ ຂອງລັດ ແລະ ເງື່ອນໄຂຄວາມສາມາດຕົວຈິງ ຂອງສະຫະພັນແມ່ຍິງ ແຕ່ລະຂັ້ນ;

5. ໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 19 (ໃໝ່) ການສິ້ນສຸດການເປັນສະມາຊິກສະຫະພັນແມ່ຍິງລາວ**

ການເປັນສະມາຊິກສະຫະພັນແມ່ຍິງລາວ ຈະສິ້ນສຸດ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຖືກລົງວິໄນ ໃຫ້ອອກຈາກ ການຈັດຕັ້ງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ, ກົດໝາຍອື່ນ ແລະ ລະບຽບການ ທີ່ກ່ຽວຂ້ອງ;

2. ເສຍຄວາມສາມາດທາງດ້ານການປະພຶດ;

3. ຖືກສານຕັດສິນລົງໂທດຕັດອິດສະລະພາບ ຍ້ອນການກະທຳຜິດໂດຍເຈດຕະນາ;

4. ເສຍຊີວິດ.

# ພາກທີ IV

# ຄະນະບໍລິຫານງານສະຫະພັນແມ່ຍິງລາວ

## ໝວດທີ 1

## ໂຄງປະກອບ, ສິດ ແລະ ໜ້າທີ່ ຂອງຄະນະບໍລິຫານງານສະຫະພັນແມ່ຍິງລາວ

**ມາດຕາ 20 (ໃໝ່) ໂຄງປະກອບຂອງຄະນະບໍລິຫານງານສະຫະພັນແມ່ຍິງລາວ**

ຄະນະບໍລິຫານງານສະຫະພັນແມ່ຍິງລາວ ປະກອບດ້ວຍ:

1. ປະທານ;
2. ຮອງປະທານ;
3. ປະທານກວດກາ;
4. ກໍາມະການ.

ສໍາລັບມາດຕະຖານ ແລະ ເງື່ອນໄຂ ຂອງຄະນະບໍລິຫານງານສະຫະພັນແມ່ຍິງລາວ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 21 (ປັບປຸງ) ສິດ ແລະ ໜ້າທີ່ ຂອງປະທານຄະນະບໍລິຫານງານສະຫະພັນແມ່ຍິງລາວ**

ປະທານຄະນະບໍລິຫານງານສະຫະພັນແມ່ຍິງລາວ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ນໍາພາ ຊີ້ນໍາ, ວາງແຜນການຈັດຕັ້ງຜັນຂະຫຍາຍ ແລະ ປະຕິບັດ ແຜນຍຸດທະສາດ, ແຜນພັດທະນາແມ່ຍິງລາວ ແລະ ແຜນດໍາເນີນງານແຫ່ງຊາດ ໃນແຕ່ລະໄລຍະ ໃຫ້ປາກົດຜົນເປັນຈິງ;
2. ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນການເຄື່ອນໄຫວວຽກງານ ພາຍໃນ ແລະ ຕ່າງປະເທດ ຂອງສະຫະພັນແມ່ຍິງລາວ;
3. ຕົກລົງ, ຮຽກໂຮມ ທັງເປັນປະທານກອງປະຊຸມໃຫຍ່, ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນຂັ້ນຂອງຕົນ;
4. ສະເໜີ, ປຶກສາຫາລື, ປະສານສົມທົບກັບແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ແລະ ການຈັດຕັ້ງອື່ນ ກ່ຽວກັບວຽກງານສະຫະພັນແມ່ຍິງລາວ ທີ່ເຫັນວ່າມີຄວາມຈໍາເປັນ;
5. ປັບປຸງ, ຂະຫຍາຍ ການຈັດຕັ້ງ ແລະ ສະມາຊິກສະຫະພັນແມ່ຍິງລາວ ຂັ້ນຂອງຕົນ ແລະ ຊີ້ນໍາຂັ້ນລຸ່ມ;
6. ຊຸກຍູ້, ສົ່ງເສີມ ການຍົກລະດັບຄວາມຮູ້, ຄວາມສາມາດທາງດ້ານ ທິດສະດີ, ວິຊາການ, ຝຶກອົບຮົມວິຊາຊີບ ໃຫ້ສະມາຊິກສະຫະພັນແມ່ຍິງລາວ ແລະ ແມ່ຍິງລາວບັນດາເຜົ່າ;
7. ສະຫຼຸບ ແລະ ລາຍງານ ສະພາບຮອບດ້ານ ກ່ຽວກັບວຽກງານສະຫະພັນແມ່ຍິງລາວ ຕໍ່ກອງປະຊຸມຄະນະບໍລິຫານງານສະຫະພັນແມ່ຍິງລາວຂັ້ນຂອງຕົນ, ຂັ້ນເທິງຖັດຕົນ ແລະ ແຈ້ງໃຫ້ຄະນະບໍລິຫານງານສະຫະພັນແມ່ຍິງລາວ ຂັ້ນລຸ່ມ;
8. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍຂອງຂັ້ນເທິງ.

ມາດຕາ 22 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຮອງປະທານຄະນະບໍລິຫານງານສະຫະພັນແມ່ຍິງລາວ

ຮອງປະທານຄະນະບໍລິຫານງານສະຫະພັນແມ່ຍິງລາວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊ່ວຍປະທານຄະນະບໍລິຫານງານສະຫະພັນແມ່ຍິງລາວຂັ້ນຂອງຕົນ ໃນການນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 21 ຂອງກົດໝາຍສະບັບນີ້ ແລະ ຮັບຜິດຊອບວຽກງານ ຕາມການມອບໝາຍຂອງປະທານຄະນະບໍລິຫານງານສະຫະພັນແມ່ຍິງລາວ;

2. ຮັກສາການແທນປະທານຄະນະບໍລິຫານງານສະຫະພັນແມ່ຍິງລາວ ໃນເວລາປະທານ ຕິດຂັດ ຫຼື ບໍ່ຢູ່ ຫຼື ຕາມການມອບໝາຍ.

ມາດຕາ 23 (ໃໝ່) ສິດ ແລະ ໜ້າທີ່ ຂອງປະທານກວດກາຄະນະບໍລິຫານງານສະຫະພັນແມ່ຍິງລາວ

ປະທານກວດກາຄະນະບໍລິຫານງານສະຫະພັນແມ່ຍິງລາວ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍ ມະຕິ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ກ່ຽວກັບວຽກງານກວດກາ ຂອງຂັ້ນເທິງ, ຂັ້ນຂອງຕົນ ເປັນແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;

2. ຕິດຕາມ ກວດກາ ການເຄື່ອນໄຫວປະຕິບັດໜ້າທີ່, ຄວາມຮັບຜິດຊອບ, ແບບແຜນວິທີເຮັດວຽກຂອງຄະນະບໍລິຫານງານສະຫະພັນແມ່ຍິງລາວ ແລະ ສະມາຊິກສະຫະພັນແມ່ຍິງລາວ;

3. ຕິດຕາມ ກວດກາ ການຄຸ້ມຄອງ, ການປະຕິບັດນະໂຍບາຍ ແລະ ປົກປ້ອງສິດ, ຜົນປະໂຫຍດອັນຊອບທຳຂອງ ສະມາຊິກສະຫະພັນແມ່ຍິງລາວ ແລະ ແມ່ຍິງລາວບັນດາເຜົ່າໃນທົ່ວປະເທດ ເພື່ອລາຍງານຕໍ່ຄະນະບໍລິຫານງານສະຫະພັນແມ່ຍິງລາວ;

4. ຕິດຕາມ ກວດກາ ການຄຸ້ມຄອງ, ການນຳໃຊ້ ລາຍຮັບ, ລາຍຈ່າຍ, ວັດຖຸ ແລະ ຊັບສິນ ຂອງສະຫະພັນແມ່ຍິງລາວຂັ້ນຂອງຕົນ;

5. ຕິດຕາມ ກວດກາ ການຈັດຕັ້ງ ແລະ ຄະນະບໍລິຫານງານສະຫະພັນແມ່ຍິງລາວຂັ້ນລຸ່ມ ກ່ຽວກັບການລົງວິໄນ ຕໍ່ສະມາຊິກສະຫະພັນແມ່ຍິງລາວ ທີ່ເຫັນວ່າມີການລະເມີດ ກົດໝາຍ, ມະຕິ ແລະ ນິຕິກຳອື່ນຂອງຄະນະບໍລິຫານງານສະຫະພັນແມ່ຍິງລາວ;

6. ສະເໜີ, ທວງ ໃຫ້ຄະນະບໍລິຫານງານສະຫະພັນແມ່ຍິງລາວ, ສະມາຊິກສະຫະພັນແມ່ຍິງລາວ ສະໜອງຂໍ້ມູນ, ເອກະສານ, ຫຼັກຖານ ທີ່ພົວພັນກັບການກວດກາ;

7. ຄົ້ນຄວ້າ, ສະເໜີ ວິທີແກ້ໄຂຜົນການກວດກາ ໃຫ້ຄະນະບໍລິຫານງານສະຫະພັນແມ່ຍິງລາວ ຂັ້ນຂອງຕົນ ຫຼື ຂັ້ນລຸ່ມ;

8. ສະເໜີ ພິຈາລະນາລົບລ້າງ ຫຼື ປ່ຽນແປງ ຮູບການລົງວິໄນ ຕໍ່ການຈັດຕັ້ງ ຂອງສະຫະພັນແມ່ຍິງລາວ ແລະ ສະມາຊິກສະຫະພັນແມ່ຍິງລາວ ທີ່ບໍ່ຖືກຕ້ອງຕາມກົດໝາຍ ຕໍ່ປະທານຄະນະບໍລິຫານງານສະຫະພັນແມ່ຍິງລາວ;

9. ສະເໜີ ພິຈາລະນາລົບລ້າງການອອກນິຕິກຳ ຂອງສະຫະພັນແມ່ຍິງລາວ ຂັ້ນລຸ່ມຂອງຕົນ ທີ່ຂັດກັບກົດໝາຍ ແລະ ກົດລະບຽບຂອງສະຫະພັນແມ່ຍິງລາວ ຕໍ່ປະທານຄະນະບໍລິຫານງານສະຫະພັນແມ່ຍິງລາວ;

10. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງຕົນ ຕໍ່ ປະທານຄະນະບໍລິຫານງານສະຫະພັນແມ່ຍິງລາວຂັ້ນຂອງຕົນ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 24 (ໃໝ່) ສິດ ແລະ ໜ້າທີ່ ຂອງກຳມະການ ຄະນະບໍລິຫານງານສະຫະພັນແມ່ຍິງລາວ**

ກຳມະການຄະນະບໍລິຫານງານສະຫະພັນແມ່ຍິງລາວ ມີ ສິດ ແລະ ໜ້າທີ່ ຊ່ວຍປະທານ, ຮອງປະທານໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານສະຫະພັນແມ່ຍິງລາວ ແລະ ເປັນຜູ້ຮັບຜິດຊອບວຽກງານດັ່ງກ່າວຕາມການມອບໝາຍ.

## ໝວດທີ 2
## ການປົ່ງຕົວແຕ່ງຕັ້ງ, ຍົກຍ້າຍ ແລະ ສິ້ນສຸດ ຄະນະບໍລິຫານງານສະຫະພັນແມ່ຍິງລາວ

**ມາດຕາ 25 (ໃໝ່) ການປົ່ງຕົວແຕ່ງຕັ້ງ ຄະນະບໍລິຫານງານສະຫະພັນແມ່ຍິງລາວ**

ການປົ່ງຕົວແຕ່ງຕັ້ງ ຄະນະບໍລິຫານງານສະຫະພັນແມ່ຍິງລາວ ໃນກໍລະນີມີຕຳແໜ່ງວ່າງໃນຄະນະບໍລິຫານງານດັ່ງກ່າວ ຕ້ອງໄດ້ຄົ້ນຄວ້າສະມາຊິກສະຫະພັນແມ່ຍິງ ທີ່ມີມາດຕະຖານ ແລະ ເງື່ອນໄຂຄົບຖ້ວນ ຕາມກົດລະບຽບຂອງສະຫະພັນແມ່ຍິງລາວ ແລະ ນິຕິກຳອື່ນທີ່ກ່ຽວຂ້ອງ ເພື່ອສະເໜີຄະນະພັກຂັ້ນຂອງຕົນ ແລະ ສະຫະພັນແມ່ຍິງຂັ້ນເທິງຖັດຕົນ ພິຈາລະນາອະນຸມັດ.

**ມາດຕາ 26 (ໃໝ່) ການຍົກຍ້າຍ ຄະນະບໍລິຫານງານສະຫະພັນແມ່ຍິງລາວ**

ຄະນະບໍລິຫານງານສະຫະພັນແມ່ຍິງລາວ ຜູ້ໃດໜຶ່ງ ໃນແຕ່ລະຂັ້ນ ຈະຍົກຍ້າຍໄປຮັບໜ້າທີ່ຢູ່ບ່ອນໃໝ່ ຕ້ອງໄດ້ປະສານສົມທົບກັບສະຫະພັນແມ່ຍິງລາວ ຂັ້ນເທິງຖັດຕົນ ແລະ ຄະນະພັກຂັ້ນຂອງຕົນ ຄົ້ນຄວ້າພິຈາລະນາ ແລະ ຄັດເລືອກບຸກຄະລາກອນ ທີ່ມີມາດຕະຖານ ແລະ ເງື່ອນໄຂ ຄົບຖ້ວນ ເພື່ອປ່ຽນແທນ.

**ມາດຕາ 27 (ໃໝ່) ການສິ້ນສຸດ ການເປັນຄະນະບໍລິຫານງານສະຫະພັນແມ່ຍິງລາວ**

ການເປັນຄະນະບໍລິຫານງານສະຫະພັນແມ່ຍິງລາວ ຈະສິ້ນສຸດ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ໄປຮຽນ ຫຼື ໄປປະຕິບັດໜ້າທີ່ ຢູ່ຕ່າງປະເທດ ແຕ່ ສາມປີ ຂຶ້ນໄປ;
2. ຍົກຍ້າຍໄປຮັບໜ້າທີ່ຢູ່ບ່ອນໃໝ່;
3. ຮັບອຸດໜູນບຳນານ, ອຸດໜູນເທື່ອດຽວ;
4. ເສຍກຳລັງແຮງງານ, ເສຍຄວາມສາມາດທາງດ້ານການປະພຶດ;
5. ຖືກລົງວິໄນ ໃຫ້ອອກຈາກ ການຈັດຕັ້ງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ, ກົດໝາຍ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ;
6. ຖືກສານຕັດສິນລົງໂທດຕັດອິດສະລະພາບ ຍ້ອນການກະທຳຜິດໂດຍເຈດຕະນາ;
7. ເສຍຊີວິດ.

## ພາກທີ V
## ກອງປະຊຸມສະຫະພັນແມ່ຍິງລາວ

**ມາດຕາ 28 (ປັບປຸງ) ປະເພດກອງປະຊຸມ**

ກອງປະຊຸມສະຫະພັນແມ່ຍິງລາວ ມີ ສາມປະເພດ ດັ່ງນີ້:

1. ກອງປະຊຸມໃຫຍ່;
2. ກອງປະຊຸມສາມັນ;

3. ກອງປະຊຸມວິສາມັນ.

**ມາດຕາ 29 (ປັບປຸງ) ກອງປະຊຸມໃຫຍ່**

ກອງປະຊຸມໃຫຍ່ສະຫະພັນແມ່ຍິງລາວ ມີ ສີ່ຂັ້ນ ດັ່ງນີ້:

1. ກອງປະຊຸມໃຫຍ່ ຜູ້ແທນແມ່ຍິງລາວທົ່ວປະເທດ;
2. ກອງປະຊຸມໃຫຍ່ ຜູ້ແທນແມ່ຍິງ ຫຼື ສະມາຊິກສະຫະພັນແມ່ຍິງ ນະຄອນຫຼວງ, ແຂວງ, ກະຊວງ, ອົງການ;
3. ກອງປະຊຸມໃຫຍ່ ຜູ້ແທນແມ່ຍິງ ຫຼື ສະມາຊິກສະຫະພັນແມ່ຍິງ ເມືອງ, ນະຄອນ ແລະ ການຈັດຕັ້ງທຽບເທົ່າ;
4. ກອງປະຊຸມໃຫຍ່ ຜູ້ແທນແມ່ຍິງ ຫຼື ສະມາຊິກສະຫະພັນແມ່ຍິງ ຮາກຖານ.

ສະຫະພັນແມ່ຍິງລາວແຕ່ລະຂັ້ນ ເປີດກອງປະຊຸມໃຫຍ່ ຂອງຕົນ ຫ້າປີໃດ ດຳເນີນເທື່ອໜຶ່ງ. ໃນກໍລະນີຈຳເປັນ ອາດຈະເປີດ ກ່ອນ ຫຼື ຫຼັງ ເວລາທີ່ກຳນົດໄວ້ກໍໄດ້ ແຕ່ບໍ່ໃຫ້ເກີນ ຫົກເດືອນ.

ກອງປະຊຸມໃຫຍ່ສະຫະພັນແມ່ຍິງລາວຂັ້ນໃດ ໃຫ້ປະທານຄະນະບໍລິຫານງານສະຫະພັນແມ່ຍິງລາວ ຂັ້ນນັ້ນ ເປັນຜູ້ຮຽກໂຮມ ໂດຍໄດ້ຮັບການອະນຸມັດ ຈາກຄະນະບໍລິຫານງານສະຫະພັນແມ່ຍິງລາວ ຂັ້ນເທິງຖັດຕົນ, ໃນກໍລະນີກອງປະຊຸມໃຫຍ່ຈະດຳເນີນ ກ່ອນ ຫຼື ຫຼັງ ເວລາທີ່ກຳນົດໄວ້ ຕ້ອງລາຍງານເຫດຜົນ ໃຫ້ຄະນະບໍລິຫານງານສະຫະພັນແມ່ຍິງລາວ ຂັ້ນເທິງຖັດຕົນ ແລະ ແຈ້ງໃຫ້ ຂັ້ນລຸ່ມ ກ່ອນ ສາມເດືອນ.

ສຳລັບກອງປະຊຸມໃຫຍ່ສະຫະພັນແມ່ຍິງລາວກະຊວງປ້ອງກັນປະເທດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 30 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກອງປະຊຸມໃຫຍ່**

ກອງປະຊຸມໃຫຍ່ ສະຫະພັນແມ່ຍິງລາວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ພິຈາລະນາ, ຮັບຮອງເອົາ ບົດລາຍງານການເມືອງ ແລະ ທິດທາງໜ້າທີ່, ແຜນພັດທະນາແມ່ຍິງລາວ ຂອງຂະແໜງການ ແລະ ທ້ອງຖິ່ນ ຂອງສະຫະພັນແມ່ຍິງລາວ ຂັ້ນຂອງຕົນ;
2. ພິຈາລະນາ ແລະ ຮັບຮອງເອົາ ບົດສຳຫຼວດການນຳພາ ຂອງຄະນະບໍລິຫານງານສະຫະພັນແມ່ຍິງລາວຂັ້ນຂອງຕົນ;
3. ຄົ້ນຄວ້າ ແລະ ຮັບຮອງເອົາການປັບປຸງກົດລະບຽບ ຂອງສະຫະພັນແມ່ຍິງລາວ ສຳລັບກອງປະຊຸມໃຫຍ່ຜູ້ແທນແມ່ຍິງລາວທົ່ວປະເທດ;
4. ເລືອກຕັ້ງຄະນະບໍລິຫານງານສະຫະພັນແມ່ຍິງລາວ ຊຸດໃໝ່ ຂັ້ນຂອງຕົນ ແລະ ເລືອກຕັ້ງເອົາຜູ້ແທນເຂົ້າຮ່ວມກອງປະຊຸມໃຫຍ່ ຂັ້ນເທິງຖັດຕົນ ຖ້າມີ;
5. ດຳເນີນກອງປະຊຸມຄົບຄະນະຄັ້ງປະຖົມມະລຶກ ຂອງຄະນະບໍລິຫານງານສະຫະພັນແມ່ຍິງລາວ ເພື່ອຄັດເລືອກເອົາປະທານ, ຮອງປະທານ, ປະທານກວດກາ ແລະ ຮອງປະທານກວດກາ ຄະນະບໍລິຫານງານສະຫະພັນແມ່ຍິງລາວຂັ້ນຂອງຕົນ;
6. ຮັບຮອງເອົາມະຕິກອງປະຊຸມໃຫຍ່ຂັ້ນຂອງຕົນ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 31 (ປັບປຸງ) ກອງປະຊຸມສາມັນ**

ກອງປະຊຸມສາມັນ ແມ່ນ ກອງປະຊຸມຄົບຄະນະບໍລິຫານງານສະຫະພັນແມ່ຍິງລາວ ຊຶ່ງເປີດຂຶ້ນ ປີລະເທື່ອ ໂດຍແມ່ນປະທານຄະນະບໍລິຫານງານສະຫະພັນແມ່ຍິງລາວຂັ້ນນັ້ນ ເປັນຜູ້ຮຽກໂຮມ ແລະ ເປັນປະທານກອງປະຊຸມ.

ກ່ອນເປີດກອງປະຊຸມສາມັນນັ້ນ ປະທານ ຕ້ອງແຈ້ງໃຫ້ຄະນະບໍລິຫານງານສະຫະພັນແມ່ຍິງລາວ ຂັ້ນຂອງຕົນ ແລະ ສະຫະພັນແມ່ຍິງ ຂັ້ນລຸ່ມ ກ່ອນ ສາມເດືອນ.

ກອງປະຊຸມສາມັນ ຕ້ອງມີຄະນະບໍລິຫານງານສະຫະພັນແມ່ຍິງລາວ ເຂົ້າຮ່ວມຢ່າງໜ້ອຍ ສອງສ່ວນສາມ ຂອງຄະນະບໍລິຫານງານທັງໝົດ ຂັ້ນຂອງຕົນ ຈຶ່ງສາມາດເປີດຂຶ້ນໄດ້.

**ມາດຕາ 32 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກອງປະຊຸມສາມັນ**

ກອງປະຊຸມສາມັນ ສະຫະພັນແມ່ຍິງລາວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ຮັບຮອງເອົາ ບົດລາຍງານການເຄື່ອນໄຫວວຽກງານໃນປີຜ່ານມາ ແລະ ທິດທາງໜ້າທີ່ຂອງສະຫະພັນແມ່ຍິງລາວຂັ້ນຂອງຕົນ;
2. ດຳເນີນຊີວິດການເມືອງພາຍໃນຄະນະບໍລິຫານງານສະຫະພັນແມ່ຍິງລາວ ຂັ້ນຂອງຕົນ;
3. ຄົ້ນຄວ້າ, ປະກອບຄຳເຫັນ ໃສ່ວຽກງານໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນແຜນດຳເນີນງານຂອງຄະນະບໍລິຫານງານສະຫະພັນແມ່ຍິງລາວ ຂັ້ນຂອງຕົນ;
4. ຮັບຮອງເອົາມະຕິກອງປະຊຸມຄົບຄະນະບໍລິຫານງານສະຫະພັນແມ່ຍິງລາວ ປະຈຳປີຂອງຕົນ;
5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 33 (ປັບປຸງ) ກອງປະຊຸມວິສາມັນ**

ກອງປະຊຸມວິສາມັນ ແມ່ນ ກອງປະຊຸມຄົບຄະນະບໍລິຫານງານສະຫະພັນແມ່ຍິງລາວ ຊຶ່ງເປີດຂຶ້ນເມື່ອໃດກໍໄດ້ ເພື່ອພິຈາລະນາວຽກງານຈຳເປັນ, ສຳຄັນ ແລະ ຮີບດ່ວນ ຕາມການຕົກລົງ ຂອງຄະນະປະທານ ຫຼື ການສະເໜີຂອງຄະນະບໍລິຫານງານ ຢ່າງໜ້ອຍ ໜຶ່ງສ່ວນສີ່ ຂອງຈຳນວນຄະນະບໍລິຫານງານທັງໝົດ ແລະ ຕ້ອງມີຜູ້ເຂົ້າຮ່ວມຢ່າງໜ້ອຍ ສອງສ່ວນສາມ ຂອງຈຳນວນຄະນະບໍລິຫານງານທັງໝົດ ຂອງຂັ້ນນັ້ນ ໂດຍແມ່ນປະທານຄະນະບໍລິຫານງານສະຫະພັນແມ່ຍິງລາວ ຂັ້ນນັ້ນ ເປັນຜູ້ຮຽກໂຮມ ແລະ ເປັນປະທານກອງປະຊຸມ.

**ມາດຕາ 34 ມະຕິກອງປະຊຸມ**

ມະຕິກອງປະຊຸມໃຫຍ່, ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນ ແມ່ນ ການຮັບຮອງເອົາເນື້ອໃນຂອງກອງປະຊຸມດັ່ງກ່າວ.

ມະຕິກອງປະຊຸມ ຈະມີຄຸນຄ່າໄດ້ ກໍຕໍ່ເມື່ອໄດ້ຮັບຄະແນນສຽງ ຫຼາຍກວ່າເຄິ່ງໜຶ່ງ ຂອງຜູ້ແທນທີ່ເຂົ້າຮ່ວມກອງປະຊຸມ.

## ພາກທີ VI

## ຄວາມຮັບຜິດຊອບຂອງ ລັດ, ສັງຄົມ ແລະ ຄອບຄົວ ຕໍ່ວຽກງານສະຫະພັນແມ່ຍິງລາວ

**ມາດຕາ 35 (ປັບປຸງ) ຄວາມຮັບຜິດຊອບຂອງລັດ**

ລັດ ມີຄວາມຮັບຜິດຊອບ ດັ່ງນີ້:

1. ວາງນະໂຍບາຍ ພັດທະນາ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງ ສະມາຊິກສະຫະພັນແມ່ຍິງລາວ ແລະ ແມ່ຍິງລາວບັນດາເຜົ່າໃນທົ່ວປະເທດ, ສົ່ງເສີມຄວາມກ້າວໜ້າ ຂອງແມ່ຍິງ, ແມ່ ແລະ ເດັກ, ຄວາມສະເໝີພາບ ຍິງ-ຊາຍ, ຕ້ານ ແລະ ສະກັດກັ້ນການຄ້າມະນຸດ ແລະ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງໃນຄອບຄົວ ແລະ ສັງຄົມ;

2. ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກ ໃຫ້ສະຫະພັນແມ່ຍິງລາວ ໄດ້ເຄື່ອນໄຫວວຽກງານຮອບດ້ານ;

3. ສ້າງ ແລະ ປະກອບບຸກຄະລາກອນເພດຍິງ, ກໍ່ສ້າງໂຄງລ່າງພື້ນຖານ, ສະໜອງງົບປະມານ, ພາຫະນະ ແລະ ສິ່ງຈຳເປັນໃຫ້ການຈັດຕັ້ງຂອງສະຫະພັນແມ່ຍິງລາວ ເພື່ອສາມາດເຄື່ອນໄຫວວຽກງານ ຕາມພາລະບົດບາດຂອງຕົນ;

4. ໃຫ້ການຍ້ອງຍໍ, ໃຫ້ນາມມະຍົດ ແກ່ສະມາຊິກສະຫະພັນແມ່ຍິງລາວ, ແມ່ຍິງລາວບັນດາເຜົ່າທີ່ມີຜົນງານໃນການອອກແຮງງານ ແລະ ຄົ້ນຄວ້າປະດິດສ້າງສິ່ງໃໝ່ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ;

5. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 36 (ປັບປຸງ) ຄວາມຮັບຜິດຊອບຂອງສັງຄົມ**

ອົງການຈັດຕັ້ງການເມືອງ-ສັງຄົມ, ອົງການຈັດຕັ້ງສັງຄົມ ລວມທັງ ບຸກຄົນ ແລະ ນິຕິບຸກຄົນ ມີຄວາມຮັບຜິດຊອບໃນການສະໜັບສະໜູນ, ຮ່ວມມື, ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກ ໃນການສຶກສາອົບຮົມ, ການພັດທະນາ, ການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງ ສະມາຊິກສະຫະພັນແມ່ຍິງລາວ ແລະ ແມ່ຍິງລາວບັນດາເຜົ່າໃນທົ່ວປະເທດ, ການສົ່ງເສີມຄວາມກ້າວໜ້າ ຂອງແມ່ຍິງ, ແມ່ ແລະ ເດັກ, ຄວາມສະເໝີພາບ ຍິງ-ຊາຍ ໃນຄອບຄົວ, ສັງຄົມ, ຕ້ານ ແລະ ສະກັດກັ້ນ ການໃຊ້ຄວາມຮຸນແຮງ ຕໍ່ແມ່ຍິງ ລວມທັງການເຂົ້າຮ່ວມໃນການຈັດຕັ້ງປະຕິບັດນະໂຍບາຍຂອງລັດ ກ່ຽວກັບວຽກງານສະຫະພັນແມ່ຍິງລາວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 4 ຂອງກົດໝາຍສະບັບນີ້.

**ມາດຕາ 37 (ປັບປຸງ) ຄວາມຮັບຜິດຊອບຂອງຄອບຄົວ**

ຄອບຄົວ ມີຄວາມຮັບຜິດຊອບ ໃນການເບິ່ງແຍງ ລ້ຽງດູລູກ, ໃຫ້ຄວາມອົບອຸ່ນ, ສຶກສາອົບຮົມ, ເປັນແບບຢ່າງທີ່ດີໃນການດຳລົງຊີວິດ, ປຶກສາຫາລື, ໃຫ້ຄຳແນະນຳ ແລະ ໃຫ້ຄວາມເປັນທຳແກ່ກັນ, ຊຸກຍູ້, ສົ່ງເສີມ, ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ແມ່ຍິງ ໄດ້ຮັບການພັດທະນາໃນທຸກດ້ານ, ມີໂອກາດເຂົ້າຮ່ວມເຄື່ອນໄຫວວຽກງານຕ່າງໆຂອງລັດ ແລະ ສັງຄົມ.

ສະມາຊິກໃນຄອບຄົວທັງ ຍິງ-ຊາຍ ມີຄວາມສະເໝີພາບກັນ, ຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງໃນຄອບຄົວ.

## ພາກທີ VII
## ການເງິນຂອງສະຫະພັນແມ່ຍິງລາວ

**ມາດຕາ 38 (ປັບປຸງ) ແຫຼ່ງລາຍຮັບຂອງສະຫະພັນແມ່ຍິງລາວ**

ລາຍຮັບຂອງສະຫະພັນແມ່ຍິງລາວ ໄດ້ມາຈາກ:

1. ງົບປະມານຂອງລັດ;
2. ເງິນບຳລຸງຂອງສະມາຊິກສະຫະພັນແມ່ຍິງລາວ;
3. ການປະກອບສ່ວນຂອງ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;
4. ລາຍຮັບຈາກການເຄື່ອນໄຫວກິດຈະກຳໃດໜຶ່ງ ທີ່ຖືກຕ້ອງຕາມກົດໝາຍ;
5. ລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 39 (ປັບປຸງ) ການຄຸ້ມຄອງ ລາຍຮັບ-ລາຍຈ່າຍ**

ສະຫະພັນແມ່ຍິງລາວແຕ່ລະຂັ້ນ ຄຸ້ມຄອງລາຍຮັບ-ລາຍຈ່າຍ ຂອງຕົນ ຢ່າງລວມສູນ ແລະ ເປັນເອກະພາບ, ປະຕິບັດລະບອບບັນຊີລາຍຮັບ-ລາຍຈ່າຍ ຕາມກົດໝາຍວ່າດ້ວຍການບັນຊີ, ກົດໝາຍວ່າດ້ວຍງົບປະມານແຫ່ງລັດ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ, ຮັບປະກັນຄວາມໂປ່ງໃສ ແລະ ສາມາດກວດສອບໄດ້.

ເງິນບຳລຸງສະມາຊິກຂອງສະຫະພັນແມ່ຍິງແຕ່ລະຂັ້ນ ໃຫ້ສະຫຼຸບ ແລະ ລາຍງານ ປະຈຳເດືອນ, ງວດ, ປີ ແລະ ຫ້າປີ ຕໍ່ສະຫະພັນແມ່ຍິງລາວ ຂັ້ນເທິງຖັດຕົນ ຕາມກົດລະບຽບຂອງສະຫະພັນແມ່ຍິງລາວ.

**ມາດຕາ 40 ການນຳໃຊ້ລາຍຮັບ**

ສະຫະພັນແມ່ຍິງແຕ່ລະຂັ້ນ ນຳໃຊ້ລາຍຮັບເຂົ້າໃນວຽກງານ ດັ່ງນີ້:

1. ການບໍລິຫານ ແລະ ການສົ່ງເສີມວິຊາການ;
2. ການຈັດກອງປະຊຸມໃຫຍ່, ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນ;
3. ການປະຕິບັດນະໂຍບາຍ ຕໍ່ການຈັດຕັ້ງ ແລະ ສະມາຊິກສະຫະພັນແມ່ຍິງລາວ;
4. ການເຄື່ອນໄຫວວຽກງານອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ VIII
## ຂໍ້ຫ້າມ

**ມາດຕາ 41 (ປັບປຸງ) ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ການຈັດຕັ້ງຂອງສະຫະພັນແມ່ຍິງລາວ ເຄື່ອນໄຫວເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ, ພັກພວກ ຂອງຕົນ;

2. ຂັດຂວາງການເຄື່ອນໄຫວວຽກງານ ຂອງສະຫະພັນແມ່ຍິງລາວ, ສະມາຊິກສະຫະພັນແມ່ຍິງລາວ ແລະ ແມ່ຍິງລາວບັນດາເຜົ່າ;

3. ນາບຂູ່, ໃຊ້ຄວາມຮຸນແຮງ ຕໍ່ຮ່າງກາຍ, ຈິດໃຈ, ຊັບສິນ ຂອງສະມາຊິກສະຫະພັນແມ່ຍິງລາວ ແລະ ແມ່ຍິງລາວບັນດາເຜົ່າ;

4. ປະລະ ແລະ ເມີນເສີຍ ຕໍ່ແມ່ຍິງ ທີ່ຖືກລ່ວງລະເມີດທາງດ້ານ ຮ່າງກາຍ, ຈິດໃຈ, ທາງເພດ ແລະ ຊັບສິນ;

5. ໂຄສະນາ ເຜີຍແຜ່ ວັດທະນະທຳ, ແບບແຜນດຳລົງຊີວິດ ທີ່ຂັດກັບ ກົດໝາຍ, ຮີດຄອງປະເພນີອັນດີງາມ ຂອງຊາດ, ຂອງທ້ອງຖິ່ນ, ຂອງເຜົ່າ ແລະ ຂອງແມ່ຍິງລາວ;

6. ຊຸດຮີດແຮງງານ, ຊຸດຮີດທາງເພດ, ບັງຄັບໃຫ້ເປັນໂສເພນີ, ຄ້າປະເວນີ ແລະ ຄ້າມະນຸດ;

7. ແບ່ງແຍກ, ຈຳແນກເພດ ທີ່ເປັນການບໍ່ສົ່ງເສີມຄວາມສະເໝີພາບ ຍິງ-ຊາຍ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 42 (ປັບປຸງ) ຂໍ້ຫ້າມ ສຳລັບສະມາຊິກສະຫະພັນແມ່ຍິງລາວ**

ຫ້າມ ສະມາຊິກສະຫະພັນແມ່ຍິງລາວ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ ແລະ ພັກພວກ ຂອງຕົນ;

2. ຈັດຕັ້ງເປັນກຸ່ມກ້ອນ, ຊຸມນຸມ ທີ່ຂັດກັບ ກົດໝາຍ, ລະບຽບການ, ກໍ່ຄວາມບໍ່ສະຫງົບ, ຄວາມບໍ່ເປັນລະບຽບຮຽບຮ້ອຍໃນສັງຄົມ ແລະ ກໍ່ຄວາມເສຍຫາຍ ຕໍ່ການຈັດຕັ້ງ, ຊີວິດ, ສຸຂະພາບ, ຊັບສິນ ຂອງຜູ້ອື່ນ;

3. ໃສ່ຮ້າຍປ້າຍສີ, ແບ່ງແຍກຄວາມສາມັກຄີພາຍໃນການຈັດຕັ້ງ ແລະ ບຸກຄົນອື່ນ;

4. ເຄື່ອນໄຫວ, ດຳລົງຊີວິດ ທີ່ຂັດກັບກົດໝາຍ, ລະບຽບການ ແລະ ຝືນ ຕໍ່ຮີດຄອງປະເພນີອັນດີງາມ ຂອງຊາດ, ຂອງທ້ອງຖິ່ນ, ຂອງເຜົ່າ ແລະ ຂອງແມ່ຍິງລາວ;

5. ເມີນເສີຍ ຕໍ່ການນຳໃຊ້ສິດ, ການປະຕິບັດໜ້າທີ່ ແລະ ພັນທະ ຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 43 (ປັບປຸງ) ຂໍ້ຫ້າມ ສຳລັບຄະນະບໍລິຫານງານສະຫະພັນແມ່ຍິງລາວ**

ຫ້າມ ຄະນະບໍລິຫານງານສະຫະພັນແມ່ຍິງລາວ ມີພຶດຕິກຳ ດັ່ງນີ້:

1. ເມີນເສີຍ, ເລີ່ນເລີ້ ຕໍ່ການນຳໃຊ້ສິດ ແລະ ການປະຕິບັດໜ້າທີ່ ຂອງຕົນ;

2. ຮັບເອົາມະຫາຊົນເຂົ້າເປັນສະມາຊິກການຈັດຕັ້ງຂອງສະຫະພັນແມ່ຍິງລາວ, ລົງວິໄນ ຫຼື ລຶບຊື່ ສະມາຊິກສະຫະພັນແມ່ຍິງລາວ ອອກຈາກການຈັດຕັ້ງຂອງຕົນ ໂດຍບໍ່ຖືກຕ້ອງ;

3. ກີດກັ້ນການເຄື່ອນໄຫວ, ການພັດທະນາ ແລະ ການສົ່ງເສີມຄວາມກ້າວໜ້າ ຂອງແມ່ຍິງລາວ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ IX

## ການຄຸ້ມຄອງ ແລະ ການກວດກາ ວຽກງານສະຫະພັນແມ່ຍິງລາວ

### ໝວດທີ 1

### ການຄຸ້ມຄອງວຽກງານສະຫະພັນແມ່ຍິງລາວ

**ມາດຕາ 44 (ປັບປຸງ) ອົງການຄຸ້ມຄອງວຽກງານສະຫະພັນແມ່ຍິງລາວ**

ອົງການຄຸ້ມຄອງວຽກງານສະຫະພັນແມ່ຍິງລາວ ປະກອບດ້ວຍ:

1. ສູນກາງສະຫະພັນແມ່ຍິງລາວ;

2. ສະຫະພັນແມ່ຍິງ ນະຄອນຫຼວງ, ແຂວງ, ກະຊວງ, ອົງການ;

3. ສະຫະພັນແມ່ຍິງ ເມືອງ, ນະຄອນ ແລະ ການຈັດຕັ້ງທຽບເທົ່າ;

4. ສະຫະພັນແມ່ຍິງ ຮາກຖານ.

**ມາດຕາ 45 (ປັບປຸງ) ສິດ ແລະ ໜ້າທີ່ ຂອງສູນກາງສະຫະພັນແມ່ຍິງລາວ**

ໃນການຄຸ້ມຄອງວຽກງານສະຫະພັນແມ່ຍິງລາວ ສູນກາງສະຫະພັນແມ່ຍິງລາວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາແມ່ຍິງລາວ ແລະ ແຜນດຳເນີນງານແຫ່ງຊາດ ກ່ຽວກັບແມ່ຍິງລາວ ໃນແຕ່ລະໄລຍະ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບວຽກງານສະຫະພັນແມ່ຍິງລາວ ເພື່ອສະເໜີຂັ້ນເທິງພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ແຜນພັດທະນາແມ່ຍິງລາວ, ແຜນດຳເນີນງານແຫ່ງຊາດ ແຕ່ລະໄລຍະ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບວຽກງານສະຫະພັນແມ່ຍິງລາວ ເປັນ ແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາແມ່ຍິງລາວ, ແຜນດຳເນີນງານແຫ່ງຊາດ ກ່ຽວກັບແມ່ຍິງລາວ ແຕ່ລະໄລຍະ ແລະ ນິຕິກຳໃຕ້ກົດໝາຍ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານສະຫະພັນແມ່ຍິງລາວ;

4. ຄົ້ນຄວ້າ, ປະກອບຄຳເຫັນ ຕໍ່ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ, ແຜນງົບປະມານແຫ່ງລັດ;

5. ສຶກສາອົບຮົມ ການເມືອງ-ແນວຄິດ, ມູນເຊື້ອວັດທະນະທຳ, ຮີດຄອງປະເພນີອັນດີງາມ ຂອງຊາດ, ຂອງທ້ອງຖິ່ນ, ຂອງເຜົ່າ ແລະ ຄຸນລັກສະນະທີ່ເປັນມູນເຊື້ອຂອງແມ່ຍິງລາວ;

6. ຊີ້ນຳການປັບປຸງ ແລະ ຂະຫຍາຍ ການຈັດຕັ້ງ ຂອງສະຫະພັນແມ່ຍິງລາວແຕ່ລະຂັ້ນ ໃນແຕ່ລະຂົງເຂດ ລວມທັງຫົວໜ່ວຍທຸລະກິດ ທັງພາກລັດ ແລະ ເອກະຊົນ ໃຫ້ຮັບປະກັນທັງປະລິມານ ແລະ ຄຸນນະພາບ;

7. ສະເໜີຕໍ່ຂັ້ນເທິງ ກ່ຽວກັບການສ້າງຕັ້ງ, ຍຸບເລີກກົງຈັກ ຂອງຕົນ, ກຳນົດກົງຈັກການຈັດຕັ້ງຂອງສະຫະພັນແມ່ຍິງ ນະຄອນຫຼວງ, ແຂວງ, ກະຊວງ, ອົງການ;

8. ຍົກເລີກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ຂອງສະຫະພັນແມ່ຍິງລາວ ຂັ້ນຂອງຕົນ ແລະ ຂັ້ນລຸ່ມ ທີ່ຂັດກັບກົດໝາຍ ແລະ ກົດລະບຽບ ຂອງສະຫະພັນແມ່ຍິງລາວ;

9. ເປັນເຈົ້າການ, ປະສານສົມທົບ ກັບທຸກຂະແໜງການທີ່ກ່ຽວຂ້ອງ ໃນການພັດທະນາ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງ ສະມາຊິກສະຫະພັນແມ່ຍິງລາວ ແລະ ແມ່ຍິງລາວບັນດາເຜົ່າໃນທົ່ວປະເທດ, ການສົ່ງເສີມຄວາມກ້າວໜ້າ ຂອງແມ່ຍິງ, ແມ່ ແລະ ເດັກ, ຄວາມສະເໝີພາບ ຍິງ-ຊາຍ ໃນຄອບຄົວ ແລະ ສັງຄົມ;

10. ໃຫ້ຄຳປຶກສາແກ່ແມ່ຍິງ ແລະ ເດັກ ທີ່ມີບັນຫາ, ເຂົ້າຮ່ວມຄົ້ນຄວ້າ, ປຶກສາຫາລື, ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ, ປະກອບຄຳເຫັນ ຕໍ່ການໄກ່ເກ່ຍ, ແກ້ໄຂບັນຫາ ທີ່ແຕະຕ້ອງເຖິງສິດ ແລະ ຜົນປະໂຫຍດອັນຊອບທຳຂອງ ສະມາຊິກສະຫະພັນແມ່ຍິງລາວ ແລະ ແມ່ຍິງລາວບັນດາເຜົ່າໃນທົ່ວປະເທດ, ຕາງໜ້າແມ່ຍິງທີ່ຕ້ອງປົກປ້ອງພິເສດ ໃນການເຂົ້າເຖິງຂະບວນການຍຸຕິທຳ ຕາມພາລະບົດບາດຂອງຕົນ;

11. ຄົ້ນຄວ້າ ປະກອບຄຳເຫັນ ຕໍ່ການສະເໜີສ້າງຕັ້ງສະມາຄົມທີ່ກ່ຽວຂ້ອງກັບວຽກງານແມ່ຍິງລາວ;

12. ປະສານສົມທົບກັບ ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ໃນການຂຶ້ນແຜນການບຳລຸງສ້າງສະມາຊິກສະຫະພັນແມ່ຍິງລາວ ແລະ ແມ່ຍິງລາວບັນດາເຜົ່າ ໃຫ້ມີຄຸນສົມບັດ, ຄວາມຮູ້, ຄວາມສາມາດທາງດ້ານຕ່າງໆ ເພື່ອກາຍເປັນພະນັກງານ ນຳພາ ຄຸ້ມຄອງ ສືບທອດປ່ຽນແທນ ໃນແຕ່ລະຂົງເຂດວຽກງານ;

13. ຊີ້ນຳ, ຕິດຕາມ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາແມ່ຍິງລາວ, ແຜນດຳເນີນງານແຫ່ງຊາດ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບວຽກງານສະຫະພັນແມ່ຍິງລາວ ໃນທົ່ວປະເທດ;

14. ພິຈາລະນາ, ສະເໜີ ແຕ່ງຕັ້ງ, ຍົກຍ້າຍ, ປະຕິບັດນະໂຍບາຍ, ລົງວິໄນ ຕໍ່ສະມາຊິກສະຫະພັນແມ່ຍິງລາວ ຕາມພາລະບົດບາດ ຂອງຕົນ;

15. ໄດ້ຮັບນະໂຍບາຍຕ່າງໆ ຈາກລັດ ຄືກັນກັບບັນດາການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ ແລະ ອົງການຈັດຕັ້ງມະຫາຊົນ;

16. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສະຫະພັນແມ່ຍິງລາວ ຕາມພາລະບົດບາດ ຂອງຕົນ;

17. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານ ຂອງສະຫະພັນແມ່ຍິງລາວ ແຕ່ລະໄລຍະໃນຂອບເຂດທົ່ວປະເທດ ຕໍ່ຂັ້ນເທິງ ແລະ ອົງການຈັດຕັ້ງອື່ນ ທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;

18. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 46 (ປັບປຸງ) ສິດ ແລະ ໜ້າທີ່ ຂອງສະຫະພັນແມ່ຍິງ ນະຄອນຫຼວງ, ແຂວງ, ກະຊວງ, ອົງການ**

ໃນການຄຸ້ມຄອງວຽກງານສະຫະພັນແມ່ຍິງລາວ ສະຫະພັນແມ່ຍິງ ນະຄອນຫຼວງ, ແຂວງ, ກະຊວງ, ອົງການ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ເຊື່ອມຊຶມ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນພັດທະນາແມ່ຍິງລາວ, ແຜນດຳເນີນງານແຫ່ງຊາດ ແລະ ນິຕິກຳໃຕ້ກົດໝາຍ, ມະຕິກອງປະຊຸມໃຫຍ່ຜູ້ແທນແມ່ຍິງລາວທົ່ວປະເທດ ແລະ ມະຕິກອງປະຊຸມໃຫຍ່ຂັ້ນຂອງຕົນ;

2. ຫັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນພັດທະນາແມ່ຍິງລາວ, ແຜນດຳເນີນງານແຫ່ງຊາດ ແລະ ນິຕິກຳໃຕ້ກົດໝາຍ, ມະຕິກອງປະຊຸມໃຫຍ່ ຂອງສະຫະພັນແມ່ຍິງຂັ້ນເທິງຖັດຕົນ ເປັນ ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານສະຫະພັນແມ່ຍິງລາວ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາແມ່ຍິງລາວ, ແຜນດຳເນີນງານແຫ່ງຊາດ, ນິຕິກຳໃຕ້ກົດໝາຍ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານສະຫະພັນແມ່ຍິງລາວ;

4. ສຶກສາອົບຮົມ ການເມືອງ-ແນວຄິດ, ເຕົ້າໂຮມຄວາມສາມັກຄີ, ອະນຸລັກ ແລະ ສົ່ງເສີມວັດທະນະທຳ, ຮີດຄອງປະເພນີອັນດີງາມ ຂອງຊາດ, ຂອງທ້ອງຖິ່ນ, ຂອງເຜົ່າ ແລະ ຄຸນລັກສະນະທີ່ເປັນມູນເຊື້ອ ຂອງແມ່ຍິງລາວ;

5. ປັບປຸງ ແລະ ຂະຫຍາຍ ການຈັດຕັ້ງ ຂອງສະຫະພັນແມ່ຍິງລາວ ໃນແຕ່ລະຂົງເຂດ ລວມທັງຫົວໜ່ວຍທຸລະກິດ ຂອງພາກລັດ ແລະ ເອກະຊົນ ໃຫ້ເຂັ້ມແຂງ, ບຳລຸງສ້າງ, ຂະຫຍາຍສະມາຊິກສະຫະພັນແມ່ຍິງລາວ ໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ;

6. ສະເໜີ ຕໍ່ສູນກາງສະຫະພັນແມ່ຍິງລາວ ກ່ຽວກັບການສ້າງຕັ້ງ, ຍຸບເລີກກົງຈັກ ຂອງຕົນ ແລະ ຂອງສະຫະພັນແມ່ຍິງ ເມືອງ, ນະຄອນ ແລະ ການຈັດຕັ້ງທຽບເທົ່າ;

7. ພິຈາລະນາ, ສະເໜີ ແຕ່ງຕັ້ງ, ຍົກຍ້າຍ, ຍ້ອງຍໍ, ລົງວິໄນ ຕໍ່ສະມາຊິກສະຫະພັນແມ່ຍິງລາວ;

8. ຍົກເລີກ ຫຼື ລຶບລ້າງ ຂໍ້ຕົກລົງ, ຄຳສັ່ງ ແລະ ຄຳແນະນຳ ຂອງສະຫະພັນແມ່ຍິງລາວ ຂັ້ນຂອງຕົນ ແລະ ຂັ້ນລຸ່ມ ທີ່ຂັດກັບ ກົດໝາຍ ແລະ ກົດລະບຽບ ຂອງສະຫະພັນແມ່ຍິງລາວ;

9. ປະສານສົມທົບກັບ ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ໃນການຂຶ້ນແຜນການບຳລຸງ ສ້າງສະມາຊິກສະຫະພັນແມ່ຍິງລາວ ແລະ ແມ່ຍິງລາວບັນດາເຜົ່າ ໃຫ້ມີຄຸນສົມບັດ, ມີຄວາມຮູ້, ຄວາມສາມາດທາງດ້ານຕ່າງໆ ເພື່ອກາຍເປັນພະນັກງານ ນຳພາ ຄຸ້ມຄອງ ສືບທອດປ່ຽນແທນ ໃນແຕ່ລະຂົງເຂດວຽກງານ;

10. ເຂົ້າຮ່ວມການເຄື່ອນໄຫວວຽກງານຕ່າງໆ, ຄົ້ນຄວ້າປຶກສາຫາລື, ປະກອບຄຳເຫັນ ແລະ ສະເໜີຕໍ່ອົງການປົກຄອງທ້ອງຖິ່ນ ຂັ້ນຂອງຕົນ ທີ່ພົວພັນກັບວຽກງານສະຫະພັນແມ່ຍິງລາວ;

11. ໃຫ້ຄຳປຶກສາ, ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີ ກ່ຽວກັບການກະທຳທີ່ແຕະຕ້ອງເຖິງສິດ ແລະ ຜົນປະໂຫຍດອັນຊອບທຳຂອງ ສະມາຊິກສະຫະພັນແມ່ຍິງລາວ ແລະ ແມ່ຍິງລາວບັນດາເຜົ່າ;

12. ໄດ້ຮັບນະໂຍບາຍຕ່າງໆ ຄືກັນກັບການຈັດຕັ້ງອື່ນຂອງ ນະຄອນຫຼວງ, ແຂວງ, ກະຊວງ, ອົງການ;

13. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສະຫະພັນແມ່ຍິງລາວ ຕາມການມອບໝາຍ;

14. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານ ຂອງຕົນ ຕໍ່ ສາຍຕັ້ງ ແລະ ສາຍຂວາງ ຢ່າງເປັນປົກກະຕິ;

15. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 47 (ປັບປຸງ) ສິດ ແລະ ໜ້າທີ່ ຂອງສະຫະພັນແມ່ຍິງ ເມືອງ, ນະຄອນ ແລະ ການຈັດຕັ້ງທຽບເທົ່າ**

ໃນການຄຸ້ມຄອງວຽກງານສະຫະພັນແມ່ຍິງລາວ ສະຫະພັນແມ່ຍິງ ເມືອງ, ນະຄອນ ແລະ ການຈັດຕັ້ງທຽບເທົ່າ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບ ຂອງຕົນ ດັ່ງນີ້:

1. ເຊື່ອມຊຶມ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາແມ່ຍິງລາວ, ແຜນດຳເນີນງານແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ນິຕິກຳໃຕ້ກົດໝາຍຂອງ ນະຄອນຫຼວງ, ແຂວງ, ມະຕິກອງປະຊຸມໃຫຍ່ຂອງສະຫະພັນແມ່ຍິງ ຂັ້ນເທິງຖັດຕົນ, ມະຕິກອງປະຊຸມໃຫຍ່ຂັ້ນຂອງຕົນ;

2. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາແມ່ຍິງລາວ, ແຜນດຳເນີນງານແຫ່ງຊາດ, ນິຕິກຳໃຕ້ກົດໝາຍ, ມະຕິກອງປະຊຸມໃຫຍ່ ຂອງສະຫະພັນແມ່ຍິງຂັ້ນເທິງຖັດຕົນ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານສະຫະພັນແມ່ຍິງລາວ;

3. ສຶກສາອົບຮົມ ການເມືອງ-ແນວຄິດ, ເຕົ້າໂຮມຄວາມສາມັກຄີ, ອະນຸລັກ ແລະ ສົ່ງເສີມວັດທະນະທຳ, ຮີດຄອງປະເພນີອັນດີງາມ ຂອງຊາດ, ຂອງທ້ອງຖິ່ນ, ຂອງເຜົ່າ ແລະ ຄຸນລັກສະນະທີ່ເປັນມູນເຊື້ອ ຂອງແມ່ຍິງລາວ;

4. ສະເໜີຍົກລະດັບ ຄວາມຮູ້, ຄວາມສາມາດທາງດ້ານຕ່າງໆ ເພື່ອກາຍເປັນພະນັກງານ ນຳພາ ຄຸ້ມຄອງ ສືບທອດ ປ່ຽນແທນ ໃນແຕ່ລະຂົງເຂດ;

5. ສະເໜີ ຕໍ່ສະຫະພັນແມ່ຍິງຂັ້ນແຂວງ ກ່ຽວກັບການສ້າງຕັ້ງ, ຍຸບເລີກກົງຈັກ ຂອງຕົນ;

6. ຝຶກອົບຮົມວິຊາຊີບ, ພັດທະນາສີມືແຮງງານ, ສ້າງວຽກເຮັດງານທຳ ເພື່ອເປັນແຫຼ່ງລາຍຮັບໃຫ້ແກ່ແມ່ຍິງ ແລະ ຄອບຄົວ ຫຼຸດພົ້ນຈາກຄວາມທຸກຍາກ, ໃຫ້ມີຄວາມຮັ່ງມີ ແລະ ຜາສຸກ;

7. ເຂົ້າຮ່ວມການເຄື່ອນໄຫວວຽກງານຕ່າງໆ, ຄົ້ນຄວ້າ ປຶກສາຫາລື, ສະເໜີ ຕໍ່ ອົງການປົກຄອງທ້ອງຖິ່ນ, ສະຫະພັນແມ່ຍິງ ນະຄອນຫຼວງ, ແຂວງ ແລະ ອົງການຈັດຕັ້ງອື່ນ ທີ່ພົວພັນກັບວຽກງານສະຫະພັນແມ່ຍິງລາວ;

8. ປັບປຸງ ແລະ ຂະຫຍາຍ ການຈັດຕັ້ງ ຂອງສະຫະພັນແມ່ຍິງຮາກຖານ ໃຫ້ເຂັ້ມແຂງ, ບຳລຸງ ສ້າງ, ຂະຫຍາຍສະມາຊິກສະຫະພັນແມ່ຍິງຮາກຖານ ໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ;

9. ໃຫ້ຄຳປຶກສາ, ພັດທະນາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ, ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ກ່ຽວກັບການກະທຳທີ່ແຕະຕ້ອງເຖິງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງສະມາຊິກສະຫະພັນແມ່ຍິງລາວ ແລະ ແມ່ຍິງລາວບັນດາເຜົ່າ;

10. ສະເໜີ ແຕ່ງຕັ້ງ, ຍ້ອງຍໍ ແລະ ລົງວິໄນ ຕໍ່ສະມາຊິກສະຫະພັນແມ່ຍິງລາວ;

11. ໄດ້ຮັບນະໂຍບາຍຕ່າງໆ ຄືກັນກັບການຈັດຕັ້ງອື່ນຂອງ ເມືອງ, ນະຄອນ ແລະ ການຈັດຕັ້ງທຽບເທົ່າ;

12. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຮອບດ້ານ ຂອງຕົນ ຕໍ່ ສາຍຕັ້ງ ແລະ ສາຍຂວາງ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 48 (ປັບປຸງ) ສິດ ແລະ ໜ້າທີ່ ຂອງສະຫະພັນແມ່ຍິງຮາກຖານ**

ໃນການຄຸ້ມຄອງວຽກງານສະຫະພັນແມ່ຍິງລາວ ສະຫະພັນແມ່ຍິງຮາກຖານ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ສຶກສາອົບຮົມ, ເຕົ້າໂຮມຄວາມສາມັກຄີ, ປຸກລະດົມ ສະມາຊິກສະຫະພັນແມ່ຍິງລາວ, ແມ່ຍິງລາວບັນດາເຜົ່າ, ຈັດຕັ້ງປະຕິບັດກົດໝາຍ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມສະຫງົບ;

2. ຄົ້ນຄວ້າ, ສະເໜີ ປັບປຸງ ແລະ ຂະຫຍາຍ ການຈັດຕັ້ງ, ສະມາຊິກສະຫະພັນແມ່ຍິງລາວ ແລະ ນຳພາການດຳເນີນຊີວິດ ໃຫ້ຖືກຕ້ອງ ຕາມກົດລະບຽບຂອງສະຫະພັນແມ່ຍິງລາວ;

3. ນຳພາສະມາຊິກສະຫະພັນແມ່ຍິງລາວ, ແມ່ຍິງລາວບັນດາເຜົ່າ ເຄົາລົບ ແລະ ປະຕິບັດກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ກົດລະບຽບ ຂອງສະຫະພັນແມ່ຍິງລາວ;

4. ສ້າງຂະບວນການຂອງແມ່ຍິງ ຕິດພັນກັບຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ, ຕິດພັນກັບວຽກງານ ສາມ ສ້າງ, ຄຳຂວັນ ແລະ ຂໍ້ແຂ່ງຂັນ ຂອງຕົນ, ການພັດທະນາເສດຖະກິດ, ວັດທະນະທຳ-ສັງຄົມ ແລະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

5. ປຸກລະດົມສະມາຊິກສະຫະພັນແມ່ຍິງລາວ, ແມ່ຍິງລາວບັນດາເຜົ່າ ເຂົ້າຮ່ວມໃນການອະນຸລັກ ແລະສົ່ງເສີມວັດທະນະທຳ, ຮີດຄອງປະເພນີອັນດີງາມ ຂອງຊາດ, ຂອງທ້ອງຖິ່ນ, ຂອງເຜົ່າ ແລະ ຄຸນລັກສະນະທີ່ເປັນມູນເຊື້ອ ຂອງແມ່ຍິງລາວ, ຟື້ນຟູ ແລະ ປົກປັກຮັກສາສິ່ງແວດລ້ອມ;

6. ປະສານສົມທົບກັບ ຄອບຄົວ, ສະຖານການສຶກສາ ແລະ ສັງຄົມ ໃນການສຶກສາອົບຮົມລູກຫຼານໃຫ້ເປັນພົນລະເມືອງດີ ຂອງຊາດ;

7. ໄດ້ຮັບນະໂຍບາຍ ຄືກັນກັບການຈັດຕັ້ງອື່ນ;

8. ໃຫ້ຄຳປຶກສາ, ເຂົ້າຮ່ວມວຽກງານໄກ່ເກ່ຍ, ແກ້ໄຂປາກົດການຫຍໍ້ທໍ້ທີ່ເກີດຂຶ້ນກັບ ແມ່ຍິງ ແລະຄອບຄົວ;

9. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງຕົນ ຕໍ່ ສາຍຕັ້ງ ແລະ ສາຍຂວາງ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 2
## ການກວດກາວຽກງານສະຫະພັນແມ່ຍິງລາວ

**ມາດຕາ 49 (ປັບປຸງ) ອົງການກວດກາວຽກງານສະຫະພັນແມ່ຍິງລາວ**

ອົງການກວດກາວຽກງານສະຫະພັນແມ່ຍິງລາວ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບ ອົງການຄຸ້ມຄອງວຽກງານສະຫະພັນແມ່ຍິງລາວຊຶ່ງໄດ້ກຳນົດໄວ້ໃນມາດຕາ 44 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດແຕ່ລະຂັ້ນ ແລະ ອົງການກວດສອບແຫ່ງລັດ.

**ມາດຕາ 50 (ປັບປຸງ) ເນື້ອໃນ ການກວດກາ**

ການກວດກາວຽກງານສະຫະພັນແມ່ຍິງລາວ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດ ພາລະບົດບາດ, ສິດ, ໜ້າທີ່, ແບບແຜນວິທີເຮັດວຽກ ຂອງຄະນະບໍລິຫານງານ ແລະ ສະມາຊິກສະຫະພັນແມ່ຍິງລາວ;

2. ການປະຕິບັດກົດໝາຍ, ກົດລະບຽບ ຂອງສະຫະພັນແມ່ຍິງລາວ, ການຈັດຕັ້ງຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່, ແຜນຍຸດທະສາດ, ແຜນພັດທະນາແມ່ຍິງລາວ ແລະ ແຜນດຳເນີນງານແຫ່ງຊາດ ໃນແຕ່ລະໄລຍະ;

3. ການອອກມະຕິ, ຄຳແນະນຳ, ຂໍ້ຕົກລົງ, ແຈ້ງການ, ແຜນການ, ແຜນງານ, ໂຄງການ ຂອງສະຫະພັນແມ່ຍິງລາວ;

4. ການປະຕິບັດນະໂຍບາຍ ຕໍ່ສະມາຊິກສະຫະພັນແມ່ຍິງລາວ ລວມທັງການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງສະມາຊິກສະຫະພັນແມ່ຍິງລາວ, ແມ່ຍິງລາວບັນດາເຜົ່າ ແລະ ການຊ່ວຍເຫຼືອແມ່ຍິງທີ່ຕ້ອງປົກປ້ອງພິເສດ;

5. ການຄຸ້ມຄອງ, ການນຳໃຊ້ງົບປະມານ, ການເງິນ, ວັດຖຸ ແລະ ຊັບສິນ ລວມທັງການຊ່ວຍເຫຼືອຈາກພາຍໃນ ແລະ ຕ່າງປະເທດ ທີ່ຢູ່ໃນຄວາມຮັບຜິດຊອບ ຂອງການຈັດຕັ້ງສະຫະພັນແມ່ຍິງລາວ;

6. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 51 (ປັບປຸງ) ຮູບການ ການກວດກາ**

ການກວດກາ ມີ ສາມຮູບການ ດັ່ງນີ້:

1. ການກວດກາແບບປົກກະຕິ ຊຶ່ງແມ່ນ ການກວດກາຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;

2. ການກວດກາ ໂດຍມີການແຈ້ງໃຫ້ຮູ້ກ່ອນລ່ວງໜ້າ ຊຶ່ງແມ່ນ ການກວດກາ ນອກແຜນການເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ກ່ອນລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ກ່ອນລ່ວງໜ້າ.

ໃນການດຳເນີນການກວດກາວຽກງານສະຫະພັນແມ່ຍິງລາວນັ້ນ ຕ້ອງປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ພາກທີ X
## ວັນສ້າງຕັ້ງ, ທຸງ, ເຄື່ອງໝາຍ ແລະ ຕາປະທັບ

**ມາດຕາ 52 (ປັບປຸງ) ວັນສ້າງຕັ້ງສະຫະພັນແມ່ຍິງລາວ**

ວັນສ້າງຕັ້ງສະຫະພັນແມ່ຍິງລາວ ແມ່ນ ວັນທີ 20 ກໍລະກົດ 1955 ແລະ ຖືເອົາວັນດັ່ງກ່າວຂອງທຸກປີເປັນວັນພັກທາງລັດຖະການຂອງພະນັກງານ-ລັດຖະກອນ, ກຳມະກອນ, ນັກຮຽນ ແລະ ນັກສຶກສາ ທີ່ເປັນແມ່ຍິງ ທັງພາກລັດ ແລະ ເອກະຊົນ.

**ມາດຕາ 53 (ປັບປຸງ) ທຸງ, ເຄື່ອງໝາຍ**

ສະຫະພັນແມ່ຍິງລາວ ມີ ທຸງ, ເຄື່ອງໝາຍ ທີ່ໄດ້ຖືກຮັບຮອງເອົາໃນກອງປະຊຸມໃຫຍ່ຜູ້ແທນແມ່ຍິງລາວທົ່ວປະເທດ.

**ມາດຕາ 54 (ປັບປຸງ) ຕາປະທັບ**

ສະຫະພັນແມ່ຍິງລາວແຕ່ລະຂັ້ນ ມີຕາປະທັບຂອງຕົນ ເພື່ອນຳໃຊ້ໃນການເຄື່ອນໄຫວວຽກງານທາງລັດຖະການ.

## ພາກທີ XI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 55 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 56 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

## ພາກທີ XII
## ບົດບັນຍັດສຸດທ້າຍ

**ມາດຕາ 57 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສູນກາງສະຫະພັນແມ່ຍິງລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 58 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 14 ກຸມພາ 2025 ພາຍຫຼັງປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນ ກົດໝາຍວ່າດ້ວຍສະຫະພັນແມ່ຍິງລາວ ສະບັບເລກທີ 31/ສພຊ, ລົງວັນທີ 23 ກໍລະກົດ 2013.

ປະທານສະພາແຫ່ງຊາດ

**ປອ ໄຊສົມພອນ ພົມວິຫານ**